**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ

ຄະນະກໍາມະການປະມູນຈັດຊື້

ໂຄງການ ປັບປຸງ ແລະ ສ້ອມແປງທາງ 13 ໃຕ້

ເງິນກູ້ຢືມຈາກທະນາຄານໂລກ (ເລກທີ 5615-LA)

ເລກທີ 06862 /ຍທຂ.ກຂທ

ນະຄອນຫຼວງວຽງຈັນ, ວັນທີ 24 ມີນາ 2020

# ໜັງສືແຈ້ງເຊີນປະມູນ

ເຖິງ: ບ/ສ ໂຕໂຍຕ້າ ລາວບໍລິການ, ບ/ສ ໂຕໂຍຕ້າ ລາວທານີ, ບ/ສ ເຊບໂຮເຣດ ລາວຈໍາກັດ, ບ/ສ ລາວຟອສຊິຕີ້ ບ/ສ ຈັນຕຶງ ມໍເຕີ້ ລາວ, ບ/ສ ມິດຊູບິຊິ ມໍເຕີ້ ລາວ, ບ/ສ ອີຊູຊຸ ລາວວີເອສເອ, ບ/ສ ອີຊູຊຸ ລາວ ບ/ສ ມາດດ້າ ລາວ.

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນເງິນກູ້ເພີ້ມຈາກທະນາຄານໂລກ ໂດຍຜ່ານ ໂຄງການຂະແໜງຂົວທາງ ໄລຍະ 2 (Lao Road Sector Project 2), ເພື່ອປັບປຸງ ແລະ ສ້ອມແປງທາງເລກ 13 ໃຕ້(ຊ່ວງ ກມ 71 ຫາ ກມ 346) ແລະ ມີຈຸດປະສົງນໍາໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງ **ການຈັດຊື້ລົດໃຫ່ຍ** ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຢູ່ສະໜາມຂອງໂຄງການ.
2. ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນສໍາລັບ ລົດກະບະຂັບເຄື່ອນ 4 ລໍ້ (Pick-up 4WD) ຈໍານວນ **4 ຄັນ** ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຢູ່ສະໜາມຂອງໂຄງການ.
   ສະຖານທີ່ສົ່ງມອບ: ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມຂົວທາງ, ນະຄອນຫຼວງວຽງຈັນ
   ຄາດຄະເນມື້ສົ່ງມອບ: **45 ວັນ ຫຼັງເຊັນສັນຍາ**
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການຈັດຊື້- ຈັດຈ້າງດ້ວຍທຶນຂອງລັດ ເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄວາມເໝາະສົມອາດໄດ້ຮັບຂໍ້ມູນຈາກ ຜູ້ຈັດຊື້ ຕາມທີ່ຢູ່ຂ້າງລຸ່ມນີ້ ແລະ ກວດກາເອກະສານປະມູນໃນວັນເວລາໂມງການ **08:00 ຫາ 16:00 ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.**

5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຊື້ເອກະສານປະມູນຄົບຊຸດເປັນ **ພາສາລາວ** ໂດຍຍື່ນໜັງສືທາທີ່ຢູ່ຂ້າງລຸ່ມນີ້ ໂດຍຈ່າຍເງິນຊຶ່ງບໍ່ສາມາດສົ່ງຄືນຈຳນວນໜຶ່ງຮ້ອຍ (100) ໂດລາສະຫະລັດ ຫຼື ເກົ້າແສນກີບ (900.000) ກີບ. ວິທີຊຳລະຕ້ອງຈ່າຍເປັນ ເງິນສົດ ຢູ່ພະແນກ ແຜນການ ແລະ ງົບປະມານ (ກົມຂົວທາງ) ແລະ ຮັບເອກະສານປະມູນ ຢູ່ໂຄງການປັບປຸງ ແລະ ສ້ອມແປງທາງເລກ 13ໃຕ້, ກົມຂົວທາງ ຕາມທີ່ຢູ່ລຸ່ມນີ້.
6. ຊອງປະມູນຈະຕ້ອງສົ່ງ ໃນວັນທີ ຫລື ກ່ອນ ວັນທີ 15 ພຶດສະພາ (5) 2020, ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ກົມຂົວທາງ, ຊັ້ນ 02 ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ການປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ເຂົ້າແຂ່ງຂັນປະມູນທີ່ຖືກແຕ່ງຕັ້ງແລະ ຄະນະກຳມະການການປະມູນຂອງໂຄງການ ຢູ່ສະຖານທີ່ໆກຳນົດໄວ້ຂ້າງເທິງ ໃນເວລາ 14:00 ໂມງ ຂອງວັນທີ 15 ພຶດສະພາ (5) 2020.
7. ທຸກໆເອກະສານຈະຕ້ອງປະກອບໜັງສື ຄໍ້າປະກັນການປະມູນ
8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງລຸ່ມນີ້ແມ່ນ:

| | |
|---|---|
| ເຖິງ: | ທ່ານ ສຸກສາກົນ ແຫວນວົງສົດ |
| ທີ່ຢູ່: | ກົມຂົວທາງ (ໂຄງການປັບປຸງ ແລະ ສ້ອມແປງທາງເລກ 13 ໃຕ້)<br>ກະຊວງໂຍທາທິການ ແລະ ຂົນສົ່ງ<br>ຖະໜົນ ລ້ານຊ້າງ, ບ້ານໂພນໄຊ, ນະຄອນຫຼວງວຽງຈັນ |
| ເມືອງ: | ໄຊເສດຖາ |
| ZIP ກົດ: | 01000 |
| ປະເທດ : | ສ.ປ.ປ.ລາວ |
| ໂທລະສັບ: | 020 56208899, 22398899 |
| ອີເມວ: | sk.venvongsoth@gmail.com |

ຫົວໜ້າກົມຂົວທາງ
ຫົວໜ້າຄະນະກຳມະການປະມູນຈັດຊື້

ລິດຕາ ຂັດທິຍະ